ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ອົງການປະກັນສັງຄົມແຫ່ງຊາດ

ເລກທີ 4573/ອປຊ
ນະຄອນຫລວງວຽງຈັນ,ວັນທີ 09.11.2026

ໜັງສືແຈ້ງເຊີນປະມູນ

1. ອົງການປະກັນສັງຄົມແຫ່ງຊາດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງ **ການປັບປຸງລະບົບໂປຼແກຼມບັນຊີ ຂອງປະກັນສັງຄົມ** ສຳລັບການສະໜອງສິນຄ້າ ແມ່ນຊ້າສຸດບໍ່ໃຫ້ເກີນ 1 ເດືອນ ພາຍຫລັງຜູ້ຈັດຊື້ ອອກເອກະສານສັ່ງຊື້.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງເຄື່ອງດັ່ງກ່າວ;
4. ບໍລິສັດໃດສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດໄດ້ທີ່ອົງການປະກັນສັງຄົມແຫ່ງຊາດ (ພະແນກທະບຽນ-ເງິນສົມທົບ) ຊັ້ນ 3 ຕັ້ງຢູ່ບ້ານ: ທົ່ງສາງນາງ, ເມືອງ: ຈັນທະບຸລີ, ນະຄອນຫລວງວຽງຈັນ, ເບີໂທ 020 56654549. ຈະເລີ່ມຂາຍຊອງແຕ່ວັນທີ 09 ພະຈິກ 2026 ເປັນຕົ້ນໄປ, ຊອງປະມູນ ລາຄາ 2,000,000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ສົ່ງຄືນຖ້າບໍລິສັດຂອງທ່ານບໍ່ຊະນະການປະມູນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
5. ຊອງປະມູນຕ້ອງສົ່ງກ່ອນເວລາ 9:00 ໂມງ ຂອງວັນທີ 14 ທັນວາ 2026. ຊອງປະມູນໃດທີ່ສົ່ງຊ້າກວ່າກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງແມ່ນຈະປິດຮັບ ແລະ ເປີດຊອງໃນເວລາ 9:00 ໂມງ, ຂອງວັນທີ 14 ທັນວາ 2026 ທີ່ຫ້ອງປະຊຸມຊັ້ນ 4 ຂອງອົງການປະກັນສັງຄົມແຫ່ງຊາດ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ ຫລື ໜັງສືຄ້ຳປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫລຸດ 02% (ສອງສ່ວນຮ້ອຍ) ຂອງມູນຄ່າສະເໜີ.

ຮັກສາການຫົວໜ້າອົງການ

ບົວຫອມ ພົມມະຈັນ